## CHDP ໃຫ້ການບໍລິການຫຍັງແດ່?

### ການກວດສຸຂະພາບທົ່ວໄປ:

- ການກວດເບິ່ງການເຕີບໃຫຍ່ແລະການພັດທະນາ
- ການສັກຢາປ້ອງກັນພະຍາດທີ່ຈຳເປັນທຸກຢ່າງ
- ການກວດແຂ້ວ
- ການກວດສາຍຕາ
- ການກວດຫູ
- ການກວດເບິ່ງດ້ານອາຫານບຳລຸງ
- ການໃຫ້ຄວາມຮູ້ດ້ານສຸຂະພາບ
- ການໃຫ້ຄວາມຮູ້ເລື້ອງຢາສູບ
- ການກວດເບິ່ງພະຍາດເລືອດຈາງ, ສານຂີ້ກົ່ວໃນເລືອດ, ຍ່ຽວ, ພະຍາດປອດແຫ້ງ, ແລະອື່ນໆທີ່ຈຳເປັນ
- ການສົ່ງຕໍ່ຈາກໂຄງການ WIC ສຳລັບເດັກນ້ອຍອາຍຸຫາ 5 ປີ

### ການກວດແຂ້ວເປັນປະຈຳແລະການຕິດຕາມກວດເບິ່ງສຸຂະພາບ ຖ້າວ່າຈຳເປັນ.

ຖ້າວ່າ ທ່ານຕ້ອງການການກວດສຸຂະພາບທົ່ວໄປ, ກວດແຂ້ວ, ຫລືກວດສຸຂະພາບຈິດເພີ້ມເຕີມອີກ, ພວກເຮົາຈະຊ່ວຍເຫລືອໃຫ້ທ່ານໄດ້ຮັບການກວດເຫລົ່ານັ້ນ. ພວກເຮົາຈະຈ່າຍຄ່າກວດບົ່ງມະຕິພະຍາດແລະການປິ່ນປົວຕາບໃດທີ່ລູກຂອງທ່ານຍັງຢູ່ໃນໂຄງການຂອງ Medi-Cal.

ສຳລັບບຸກຄົນທີ່ມີ Medi-Cal ແບບມີຄ່າໃຊ້ຈ່າຍຮ່ວມ, ທ່ານອາດຂໍໃຫ້ໂຄງການ CHDP ເປັນຜູ້ຈ່າຍຄ່າກວດ ຫລືທ່ານອາດເປັນຜູ້ຈ່າຍຄ່າກວດ ແລະນັບເອົາຍອດຄ່າຈ່າຍເຂົ້າໃນລາຍການຈ່າຍທີ່ກຳນົດໄວ້ຂອງທ່ານໄດ້. ບໍ່ຕ້ອງເສັຽຄ່າຈ່າຍຮ່ວມສຳລັບການບໍລິການ CHDP.

ໃຫ້ຖືເອົາບັດປະຈຳຕົວ Medi-Cal ປັດຈຸບັນ ແລະບັນທຶກການສັກຢາປ້ອງກັນພະຍາດມານຳ.

## ຂໍ້ມູນເພີ້ມເຕີມ:

ເພື່ອຂໍເອົາຂໍ້ມູນເພີ້ມເຕີມ, ຫລືຂໍເອົາການຊ່ວຍເຫລືອໃນການເຮັດນັດໝາຍ ແລະພາຫະນະຂົນສົ່ງ, ໃຫ້ຕິດຕໍ່ຫ້ອງການ CHDP ໃນເຂດຂອງທ່ານ. ຈົ່ງຊອກຫານຳ້ເບີໂທຣະສັບຂອງຫ້ອງການຣັຖໃນປື້ມໂທຣະສັບຂອງທ່ານ. ໃຫ້ເບິ່ງຂ້າງລຸ່ມຫົວຂໍ້ *Child Health and Disablility Prevention* ຫລື *Health Department*.

ຫລື, ຊອກຫາຫ້ອງການຂອງ CHDP ໃນເຂດຂອງທ່ານທີ່
**www.dhcs.ca.gov/services/chdp**

ຖ້າວ່າ ທ່ານຕ້ອງການການຊ່ວຍເຫລືອດ້ານສຸຂະພາບຈິດ, ໃຫ້ໂທຣຫາພະແນກສຸຂະພາບຈິດປະຈຳເຄົາຕີ້ຂອງທ່ານ. ເຂົາເຈົ້າສາມາດບອກທ່ານໄດ້ກ່ຽວກັບການບໍລິການອື່ນໆຂອງ Medi-Cal ຢ່າງຄົບຖ້ວນສຳລັບເດັກນ້ອຍແລະເຍົາວະຊົນທີ່ມີບັນຫາຮຸນແຮງດ້ານອາລົມ.

Edmund G. Brown, Jr.
ຜູ້ວ່າການຣັຖແຄລີຟໍເນັຽ

(Laotian, 1/04)

## Laotian

ໂຄງການປ້ອງກັນສຸຂະພາບແລະ
ການພິການສຳລັບເດັກນ້ອຍ (CHDP)

# ການກວດສຸຂະພາບທົ່ວໄປ ແລະການກວດແຂ້ວ



**ຟຣີ**
**ສຳລັບແອນ້ອຍ, ເດັກນ້ອຍ, ແລະ**
**ເຍົາວະຊົນທີ່ມີອາຍຸເຖິງ 20 ປີ**
ໂດຍຮັບການກວດຈາກ **Medi-Cal** ຢ່າງເຕັມສ່ວນ

# ເປັນຫຍັງຈຶ່ງຕ້ອງກວດສຸຂະພາບ?

ການກວດ**ສຸຂະພາບ**ຢ່າງຄົບຖ້ວນສົມບູນອາດຊ່ວຍໃຫ້ຮູ້ບັນຫາສຸຂະພາບທົ່ວໄປ, ບັນຫາດ້ານແຂ້ວ, ແລະ/ຫລືບັນຫາສຸຂະພາບຈິດໄດ້ ກ່ອນທີ່ມັນຈະຮຸນແຮງ. ມີການບໍລິການສັກຢາປ້ອງກັນພະຍາດທີ່ຈຳເປັນ. ຖ້າວ່າທ່ານຕ້ອງການ, ອາດມີການກວດສຸຂະພາບທົ່ວໄປຢູ່ເຮືອນອຸປະຖຳ, ບ່ອນຫລິ້ນກິລາ, ຫລືຢູ່ແຄ້ມປ໌. ໂດຍທົ່ວໄປແລ້ວທ່ານສາມາດຂໍຮັບການກວດ CHDP Check-Ups ໄດ້ໃນບ່ອນທີ່ທ່ານຮັບການບໍລິການດ້ານສຸຂະພາບເປັນປະຈຳ.

## ແອນ້ອຍແລະເດັກນ້ອຍ
***ຕັ້ງແຕ່ເກີດຫາ 3 ປີ***

### ການກວດສຸຂະພາບທົ່ວໄປສຳລັບແອນ້ອຍ ລະການສັກຢາປ້ອງກັນພະຍາດ

ບັນດາແອນ້ອຍແລະເດັກນ້ອຍຈຳເປັນຕ້ອງໄດ້ກວດກາສຸຂະພາບເລື້ອຍໆ. ເຂົາເຈົ້າຈຳເປັນຕ້ອງຮັບການສັກຢາປ້ອງກັນພະຍາດຢ່າງກົງເວລາ.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

| | |
|---|---|
| ຕ່ຳກວ່າ 1 ເດືອນ | 10-12 ເດືອນ |
| 1-2 ເດືອນ | 13-15 ເດືອນ |
| 3-4 ເດືອນ | 16-23 ເດືອນ |
| 5-6 ເດືອນ | 2 ປີ |
| 7-9 ເດືອນ | 3 ປີ |

## ເດັກນ້ອຍເຂົ້າໂຮງຮຽນ
***ຕັ້ງແຕ່ອາຍຸ 4 ປີຫາ 12 ປີ***

### ການກວດສຸຂະພາບທົ່ວໄປເມື່ອເຂົ້າໂຮງຮຽນ

ກົດໝາຍຣັຖກຳນົດໃຫ້ເດັກນ້ອຍທີ່ເຂົ້າອະນຸບານ ຫລືຊັ້ນທີໜຶ່ງຕ້ອງຮັບການກວດສຸຂະພາບທົ່ວໄປແລະສັກຢາປ້ອງກັນພະຍາດຕາມກຳນົດເປັນປະຈຳ.

ການກວດສຸຂະພາບທົ່ວໄປອາດຊ່ວຍໃຫ້ຮູ້ບັນຫາດ້ານສຸຂະພາບທີ່ເປັນອຸປະສັກຕໍ່ການຮຽນຂອງເດັກນ້ອຍ.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

ລະຫວ່າງອາຍຸ 4-5 ປີ
ລະຫວ່າງອາຍຸ 6-8 ປີ
ລະຫວ່າງອາຍຸ 9-12 ປີ

## ໄວໜຸ່ມແລະເຍົາວະຊົນ
***ຕັ້ງແຕ່ອາຍຸ 13 ປີຫາ 20 ປີ***

### ການກວດສຸຂະພາບທົ່ວໄປ

ບັນດາຊາວໜຸ່ມກໍ່ຈຳເປັນຕ້ອງໄດ້ກວດສຸຂະພາບເໝືອນກັນ! ເຂົາເຈົ້າອາດມີຂໍ້ສົງໃສຕ່າງໆ ກ່ຽວກັບສຸຂະພາບຂອງເຂົາເຈົ້າ. ເຂົາເຈົ້າສາມາດຖາມທ່ານໝໍໄດ້.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

ລະຫວ່າງອາຍຸ 13-16 ປີ
ລະຫວ່າງອາຍຸ 17-20 ປີ

ຈົ່ງຖາມທ່ານໝໍຂອງທ່ານຫລືພະແນກສຸຂະພາບໃນທ້ອງຖິ່ນ ເພື່ອຮູ້ກ່ຽວກັບການບໍລິການອື່ນໆ ສຳລັບຊາວໜຸ່ມ.